ໂຄງການການສຶກສາເພື່ອຊ່ວຍຕົນເອງ

ຄວາມຮູ້ທ້ອງຖິ່ນ

# ການຕົ້ມໝາກຕາວ

( ສະບັບທົດລອງໃຊ້ )



ຂໍ້ມູນຈາກບ້ານປຸ່ງປ່າຕາວ

ເມືອງຄໍາເກີດ, ແຂວງບໍລິຄໍາໄຊ

ຂຽນໂດຍ: ທ່ານ ດວງດີ ແລະ ພໍ່ສາຄອນ

2007

ຄວາມຮູ້ທ້ອງຖິ່ນ

# ການຕົ້ມໝາກຕາວ

ຂໍ້ມູນຈາກ: ບ້ານປຸ່ງປ່າຕາວ ເມືອງຄຳເກີດ
ແຂວງບໍລິຄຳໄຊ
ຂຽນໂດຍ: ທ່ານ ດວງດີ
ພໍ່ ສາຄອນ
ຮຽບຮຽງໂດຍ: ອຈ ບຸນຍົງ ແກ້ວຄູນເມືອງ
ຄູ ລິດສິດາ
ພິມແລະຈັດໜ້າໜ້າໂດຍ: ນ. ສຸກັນຍາ ສີວິໄຊ
ແຕ້ມໂດຍ: ທ. ສິດປະກອນ

ເຈົ້າຂອງ: ຫ້ອງການສຶກສາເມືອງຄຳເກີດ, ແຂວງບໍລິ
ຄຳໄຊ ແລະສູນອົບຮົມຮ່ວມພັດທະນາ
ອຸປະຖຳໂດຍ:
New Zealand Agency for International
Development ( NZAID )

## ຄຳນຳ

ປຶ້ມເຫລັ້ມນີ້ເປັນຜົນງານການຂຽນຂອງຄູອາຈານ ແລະຊາວບ້ານ ປຸ່ງປ່າຕາວ, ເມືອງຄຳເກີດ, ແຂວງບໍລິຄຳໄຊ ຊຶ່ງເປັນການຮຶບໂຮມປະສົບການໃນການດຳລົງຊີວິດແບບເພິ່ງຕົນເອງ, ກຸ້ມຕົນເອງໂດຍອາໄສທຳມະຊາດ, ສິ່ງແວດລ້ອມອ້ອມຕົວແບບດັ້ງເດີມຕັ້ງແຕ່ດົນນານຈົນເຖິງປະຈຸບັນນີ້.

ປຶ້ມເຫລັ້ມນີ້ເປັນບ່ອນອີງໃຫ້ແກ່ຄູໃນການສຶກສາແນວຄວາມຄິດຮັກທຳມະຊາດ, ຮັກພູມປັນຍາກໍຄືວິຖີຊີວິດທ້ອງຖິ່ນໃຫ້ແກ່ເດັກເພື່ອສ້າງແນວຄິດຮັກທ້ອງຖິ່ນຂອງຕົນ.

ຄະນະຈັດທຳຄິດວ່າປຶ້ມເຫລັ້ມນີ້ເຊິ່ງເປັນສະບັບທົດລອງແລະຄົງເປັນປະໂຫຍດບໍ່ຫລາຍກໍໜ້ອຍໃຫ້ແກ່ຄູອາຈານໃນການສິດສອນເດັກແລະຄິດວ່າຍັງມີຫລາຍສິ່ງຫລາຍຢ່າງທີ່ຍັງຂາດຕົກບົກພ່ອງທີ່ພ້ອມຈະປັບປຸງປ່ຽນແປງຕາມຄວາມເໝາະສົມ

ຄະນະຈັດທຳ

# ມາຮູ້ກ່ຽວກັບຕົ້ນຕາວ

ຕົ້ນຕາວແມ່ນຕົ້ນໄມ້ຊະນິດໜຶ່ງທີ່ເກີດຈາກທຳມະຊາດເອງ. ພວກເຮົາບໍ່ໄດ້ປົວລະປັດ, ເກີດມາກໍເຫັນເລີຍ.

ລັກສະນະຂອງຕົ້ນຕາວແມ່ນຄ້າຍຄືກັບຕົ້ນໝາກພ້າວນີ້ລະ ຕ່າງແຕ່ວ່າລຳຕົ້ນຂອງມັນດຳກວ່າຕົ້ນພ້າວ, ບ່ອນກ້ານໂຮມຂອງມັນມີຟອຍຫຸ້ມຢູ່ອ້ອມຮອບຕາມກາບຂອງມັນແລ້ວຍັງມີໝາກຊ້ອນກັນຂຶ້ນ, ໃບຂອງມັນແມ່ນມີສີຂຽວແກ່ທາງກ້ອງໃບແມ່ນມີສີຂາວເຫລື້ອມ ກ່ອນມັນຈະເປັນໝາກກໍມີແຫບອອກຄືກັນກັບໝາກພ້າວກ່ອນມັນຈະແຕກອອກເປັນໝາກຈົນຮອດ 1 ປີຈຶ່ງອອກໝາກໄດ້ ( 2 – 3 ປີ ໝາກຈຶ່ງແກ່ ຫລື ຕົ້ນໄດ້ )ແລະເປັນໝາກຮອດ 3 ເທື່ອຕົ້ນຕາວກໍຈະສຸດຍອດແລ້ວກໍຕາຍ.



ແຕ່ກ່ອນນັ້ນເຮົາຍັງບໍ່ທັນຮູ້ວ່າໝາກຕາວກິນໄດ້ພຽງ ແຕ່ຄິດວ່າກິນໄດ້ແຕ່ຍອດ ແລະ ຫົວມັນຊື່ໆ.

ມາເຖິງປີ 1999 ພວກເຮົາຈຶ່ງພາກັນຂຶ້ນຕັດເອົາໝາກຕາວນັ້ນມາຕົ້ມທົດລອງເບິ່ງແຕ່ນັ້ນມາຈຶ່ງຮູ້ວ່າໝາກຕາວສາມາດກິນໄດ້, ກ່ອນຈະກິນພວກເຮົາຕ້ອງລ້າງນ້ຳໃຫ້ສະອາດກ່ອນຈຶ່ງກິນເພາະມັນຄັນຄາຍ, ຖ້າເຂົ້າຕາກໍຈະເຮັດໃຫ້ເຈັບຕາໄດ້.

ຫລັງຈາກນັ້ນພວກເພິ່ນໄດ້ມີແຜນຮັບຊື້ໝາກຕາວແລ້ວຊາວບ້ານພວກເຮົາຈຶ່ງພາກັນໄປຕົ້ມຢູ່ຕາມພູ,ຜາ.

ວິທີການຕົ້ມໝາກຕາວກ່ອນອື່ນໝົດເພິ່ນຈະຕ້ອງກຽມອຸປະກອນຄື: ໝໍ້, ພ້າ, ຕຸກນ້ຳ,ຢາງ ມັດ, ໄມ້ໜີບໃຫ້ຄົບ, ຈາກນັ້ນແມ່ນຂຶ້ນໄປຕັດເອົາແຊງໝາກຕາວແລະຕັດເອົາແຕ່ໜ່ວຍຂອງມັນມາຕົ້ມໃຫ້ສຸກຈຶ່ງຕັກອອກມາ



ຈາກນັ້ນໃຫ້ຕັດຫົວມັນອອກຈົນໃຫ້ເຫັນຕາຂາວຈິ່ງເອົາໄມ້ໜີບອອກແລະເອົາໄປຕາກໄວ້ໃຫ້ເຢັນແລ້ວກໍເອົາໃສ່ຖົງເລີຍ  ຈາກນັ້ນກໍເອົາລົງມາຂາຍ 1 ກິໂລ ມີລາຄາ 3.300 ກີບ ( ປີ 2005 – 2006 ) ບາງຄອບຄົວເພິ່ນກໍພາກັນໄປນອນຕົ້ມ 4 – 5 ມື້ຈິ່ງເອົາມາຂາຍ.

ຕົ້ນຕາວ ແລະ ໝາກຂອງມັນມີຄວາມສຳຄັນຕໍ່ພວກເຮົາຫລາຍ, ນອກຈາກໄດ້ກິນແລ້ວກໍຍັງຂາຍໄດ້ເພາະໝາກຕາວນຳມາເຮັດນ້ຳຫວານ, ຂະໜົມໝາກຕາວ ແລະອື່ນໆໄດ້ອີກ.

ສະນັ້ນ, ພວກເຮົາທຸກຄົນຈິ່ງຄວນພາກັນຮັກສາຕົ້ນຕາວໄວ້ໃຫ້ຫລາຍຕື່ມອີກ.



ໝໍ້ຕົ້ມໝາກຕາວ

## ບົດເພງ: ເຊີນອ້າຍມາຕົ້ມໝາກຕາວ

ເຊີນເດີ ເຊີນອ້າຍມາແວ່
ມາທະແມ ມາຕົ້ມໝາກຕາວ
ຊຸມບ່າວສາວ ບ້ານນ້ອງດີໃຈ
ໃຫ້ອ້າຍມາໄວ ມາຫານ້ອງແດ່
ໃຫ້ອ້າຍຄອບພໍ່ ຄອບແມ່ ( 2 )
ອ້າຍຈຶ່ງມາແວ່ ຕົ້ມໝາກຕາວນຳນ້ອງ
\+ ຈຶ່ງຕົກລົງ ຕັດໃຈມາເຖິດອ້າຍ
ຫາກຈິງໃຈ ໃຫ້ອ້າຍນັ້ນຮີບມາ
ນ້ອງນີ້ຍັງລໍຖ້າ ຖ້າວ່າອ້າຍມາ
ເວລາໃດ ນ້ອງຈະໄປ
ຫາກວ່າອ້າຍ ບໍ່ຕິວ່າໄປທາງໄກ
ບ່ອນທີ່ມີປ່າໄມ້ໃຫຍ່ ນັ້ນມີໝາກຕາວຫລາຍ



## ກາບ: ທຳມະຊາດຕົ້ນຕາວ

ດິນແດນພູແປກ ຕົ້ນໄມ້ງາມຫລາຍ
ມີຕົ້ນຕາວຢາຍ ງາມຫລາຍແທ້ນໍ້
ໃຜໄດ້ມາພໍ້ ມາພົບກໍຖາມ
ໂອຈັ່ງແມ່ນງາມ ຫລາຍເດພີ່ນ້ອງ
ພວກເຮົາຈຶ່ງຕ້ອງ ພາກັນຮັກສາ
ເມື່ອຕົ້ນໃຫຍ່ມາ ເຮົາໄດ້ແກງຍອດ
ເວົ້າໄປກໍຮອດ ຍັງໝາກຂອງມັນ
ເພາະມັນສຳຄັນ ມີລາຄາຫລາຍ
ເຮົາຕົ້ມມາຂາຍ ໄດ້ເງິນໃຊ້ຈ່າຍ
ຢ່າຖາງເຮັດໄຮ່ ຕົ້ນຕາວຈຶ່ງຫລາຍ



## ເຊີ້ງ: ແຂ່ງຂັນກັບຕົ້ນໝາກຕາວ

ໂຮ...........ຮິວ ( 3 )

| | |
|---|---|
| ເອົາມາເຮົາມາ | ມາຕົ້ນໝາກຕາວ |
| ລຳຕົ້ນມັນຍາວ | ລຽນກັບຊ້າຍລ້າຍ |
| ຕົ້ນໃຫ້ໄດ້ຫລາຍ | ທັງຍິງ ແລະ ຊາຍ |
| ຢ່າເມົາແຕ່ອາຍ | ຮີບພາກັນຕົ້ມ |
| ຢ່າເມົາແຕ່ລົມ | ແນວເລື່ອງບໍ່ດີ |
| ຍາມໝາກຕາວມີ | ໄວ້ໃຫ້ເອົາເງິນ |
| ຢ່າເວົ້າຂວັນເພິ່ນ | ເພາະຄວາມບໍ່ດີ |
| ຈົ່ງສາມັກຄີ | ກັນພີ່ນ້ອງເອີຍ |



ແຊງໝາກຕາວ

## ວິຊາຄະນິດສາດ

## ບົດທີ 1

( ສຳລັບນັກຮຽນປ.4 ແລະ ປ. 5 )

ປ້າບຸນມາກມີອາຊີບເຮັດນາແຕ່ລະປີເມື່ອເຮັດນາແລ້ວ, ເວລາຫວ່າງລາວໄດ້ໄປຊອກຕົ້ມໝາກຕາວມື້ໜຶ່ງໄດ້ 2 ແຊງມີປະມານ 1500 ໜ່ວຍແລະ ຈະໄດ້ແກ່ນຕາວປະມານ 40 ກິໂລກຼາມຢາກຖາມນ້ອງວ່າ:

- ຖ້າລາວຕົ້ມໝາກຕາວ 5 ມື້ ຈະໄດ້ໝາກຕາວຈັກໜ່ວຍ ?
- ຖ້າລາວຕົ້ມໝາກຕາວ 4 ມື້ ຈະໄດ້ໝາກຕາວຈັກໜ່ວຍ?
- ຖ້າລາວຕົ້ມໝາກຕາວ 1 ອາທິດຈະໄດ້ໝາກຕາວຈັກໜ່ວຍ ?
- ຖ້າລາວຕົ້ມໝາກຕາວ 2 ທິດຈະໄດ້ໝາກຕາວຈັກໜ່ວຍ ?
- ຖ້າລາວຕົ້ມໝາກຕາວ 1 ມື້ຈະໄດ້ໝາກຕາວຈັກກິໂລ?
- ຖ້າລາວຕົ້ມໝາກຕາວ 6 ມື້ຈະໄດ້ໝາກຕາວຈັກກິໂລ?
- ຖ້າລາວໄດ້ໝາກຕາວ 2000 ໜ່ວຍຈະໄດ້ໝາກຕາວຈັກກິໂລ?

## ບົດເລກທີ່1:

( ສໍາລັບນັກຮຽນປ. 2, ປ. 3 )

ນາງອັນນີເພິ່ນຕົ້ມໝາກຕາວມື້ໜຶ່ງສາມາດຕົ້ມໄດ້ 15 ກິໂລ ກຼາມ. ມື້ທີ່ 2 ຕົ້ມໄດ້ 18 ກິໂລກຼາມ, ຖາມວ່ານາງອັນນີຕົ້ມໝາກຕາວທັງສອງມື້ນັ້ນໄດ້ຈັກກິໂລ ?

## ບົດເລກທີ່ 2

( ສໍາລັບນັກຮຽນຫ້ອງ ປ.5 )

ປ້າບຸນມາກເພິ່ນຂາຍໝາກຕາວເທື່ອທີ່ໜຶ່ງ 30 ກິໂລກຼາມ ແລະ ເທື່ອທີ່ສອງ 45 ກກ, ຖາມວ່າປ້າບຸນມາກຂາຍໝາກຕາວໄດ້ ເງິນເທົ່າໃດ ( ຮູ້ວ່າໝາກຕາວ 1 ກກ ຕໍ່ 3.500 ກີບ )



ໂດຍ: ນ. ອັນນີ

ປ້າ. ມາກ

ທ. ໄມນ້ອຍ

## ເກມ: ເກັບໝາກຕາວ

<u>ຈຸດປະສົງ:</u>

- ເພື່ອໃຫ້ເດັກມີຄວາມສາມັກຄີແລະຮູ້ຈັກການເຮັດວຽກເປັນກຸ່ມ

<u>ອຸປະກອນ:</u>

- ເຈ້ຍສີຕັດເປັນຮູບແກ່ນໝາກຕາວ ຫລືກ້ອນຫີນຈຳນວນ 60 ກ້ອນ ແທນກໍໄດ້

<u>ເວລາແລະຈຳນວນຄົນ:</u>

- ເວລາ 15 ນາທີ,ຜູ້ຫລິ້ນ 30 ຄົນ

<u>ບາດກ້າວດຳເນີນການຫລິ້ນ:</u>

1. ແບ່ງກຸ່ມ
2. ອະທິບາຍວິທີການຫລິ້ນ
3. ສາທິດວິທີການຫລິ້ນ
4. ປະຕິບັດຕົວຈິງ
5. ສະຫລຸບການຫລິ້ນເກມ

<u>ເນື້ອໃນແລະກະຕິກາ:</u>

1. ເອົາໝາກຕາວຈຳລອງໄປວາງໄວ້ທາງໜ້າແຖວ
2. ແບ່ງເດັກອອກເປັນ 3 ກຸ່ມ, ກຸ່ມລະ 10 ຄົນ
3. ໃຫ້ເດັກຈັບມືກັນແລ້ວຍ່າງອອກຈາກເສັ້ນເລີ່ມ
4. ຍ່າງໄປເອົາແກ່ນໝາກຕາວ ຜູ້ລະ 2 ແກ່ນ
5. ເບື້ອງລະແກ່ນແລ້ວເອົາໄປກອງໄວ້ບ່ອນເລີ່ມຕົ້ນ

6. ໂດຍບໍ່ໃຫ້ປະມືກັນພາຍໃນເວລາ 5 ນາທີກຸ່ມໃດ ໄດ້ແກ່ນໝາກຕາວຫລາຍກວ່າໝູ່ແມ່ນຊະນະ
7. ຖ້າກຸ່ມໃດບໍ່ທັນແລ້ວແມ່ນໃຫ້ກຸ່ມນັ້ນຮ້ອງເພງ

